ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

**ຄະນະປະຈໍາ** ເລກທີ 19 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 11/01/21

# ມະຕິ

## ຂອງ ຄະນະປະຈໍາສະພາແຫ່ງຊາດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ

--------------------------

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈໍາສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ;
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 92/ນຍ, ວັນທີ 18 ສິງຫາ 2020;
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 8 ມັງກອນ 2021.

**ຄະນະປະຈໍາສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍ ການການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈໍາສະພາແຫ່ງຊາດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ປະທານ**

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ**

**ຄະນະປະຈຳ**

ເລກທີ 02 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 12 / 01 / 21

# ໜັງສືສະເໜີ

**ຮຽນ : ທ່ານ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ນັບຖື;**

**ເລື່ອງ : ການພິຈາລະນາ ອອກສານປະກາດ ການໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍການ ການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ.**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 67 ຂໍ້ 14 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງ ປະທານປະເທດ ແຫ່ງ ສປປ ລາວ ໃນການປະກາດໃຊ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ;
- ອີງຕາມ ກົດໝາຍ ວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 18/ສພຊ, ລົງວັນທີ 8 ພຶດສະພາ 2017, ມາດຕາ 44 ກ່ຽວກັບການປະກາດໃຫ້ສັດຕະຍາບັນ;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 19/ຄປຈ, ລົງວັນທີ 11 ມັງກອນ 2021.

ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂໍຖືເປັນກຽດ ຮຽນສະເໜີມາຍັງ ທ່ານ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພິຈາລະ ນາອອກສານປະກາດການໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍ ການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ ເພື່ອໃຫ້ສັດຕະຍາບັນດັ່ງກ່າວມີ ຜົນບັງຄັບໃຊ້ຕາມ ລັດຖະທຳມະນູນ ແລະ ກົດໝາຍ ທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈິ່ງຂໍຖືເປັນກຽດຢ່າງສູງ ຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຄະນະປະຈຳສະພາແຫ່ງຊາດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ປະທານ**

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ**

ຄະນະເລຂາທິການ

ເລກທີ 03 /ຄລສ.ຕຫ

ນະຄອນຫຼວງວຽງຈັນ, ວັນທີ 19 / 01 / 21

## ສະໂນດນຳສົ່ງ

**ຮຽນ: ທ່ານ ຫົວໜ້າຫ້ອງວ່າການປະທານປະເທດ ທີ່ນັບຖື,**

**ເລື່ອງ: ນຳສົ່ງເອກະສານ**

**ເອກະສານທີ່ສົ່ງມາ ປະກອບມີ:**

| ລ/ດ | ເນື້ອໃນຂອງເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1. | ໜັງສືສະເໜີຂອງ ທ່ານ ປະທານຄະນະປະຈຳສະພາແຫ່ງຊາດ ເຖິງ ທ່ານ ປະທານປະເທດ ແຫ່ງ ສປປ ລາວ ເພື່ອຂໍພິຈາລະນາອອກສານປະກາດ ການໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍ ການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ, ສະບັບເລກທີ 02/ຄປຈ, ລົງວັນທີ 11 ເດືອນ ມັງກອນ ປີ 2021. | 01 ສະບັບ | ເພື່ອຂໍການພິຈາລະນາຈາກຂັ້ນເທິງ ໃນການປະກາດການໃຫ້ສັດຕະຍາບັນ ແລະ ປະສານໄປຍັງພາກສ່ວນກ່ຽວຂ້ອງຕາມທາງຄວນດ້ວຍ. |
| 2. | ມະຕິຕົກລົງຂອງ ຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍ ການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ; ສະບັບເລກທີ 19/ຄປຈ, ລົງວັນທີ 11 ເດືອນ ມັງກອນ ປີ 2021. | | |

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

**ເລຂາທິການສະພາແຫ່ງຊາດ**

ສະພາແຫ່ງຊາດ ຄະນະເລຂາທິການ

**ສອນສະຫວັນ ວິຍະເກດ**